


## ຜົນຜະລິດ

ເຂົ້າລາບູນສາມາດໃຫ້ຜົນຜະລິດ ສູງກ່ວາແນວພັນເຂົ້າຂອງຊາວກະສິກອນ ເຖິງ 7-30% ຫຼື 137-401 ກລ/ຮຕ. ໃນສະພາບຂອງດິນທີ່ແຕກຕ່າງກັນ ແຕ່ໄດ້ຫຼາຍກ່ວາໝູ່ແມ່ນໃນໄຮ່ທີ່ປູກເຂົ້າຕໍ່ເນື່ອງກັນ 2 ປີ (401 ກລ/ຮຕ) ຮູບທີ່ 1. ສໍາລັບການນໍາໃຊ້ຝຸ່ນໃນໄຮ່ເຂົ້າແມ່ນບໍ່ແນະນໍາໃສ່ ເພາະວ່າການຕອບສະໜອງຕໍ່ຝຸ່ນຂອງເຂົ້າບົກພື້ນເມືອງແມ່ນຕໍ່າ ຫຼື ບໍ່ເປັນເສດຖະກິດ.




ຮູບທີ່ 1. ຜົນຜະລິດໃນໃນດິນປ່າເຫຼົ່າທີ່ແຕກຕ່າງກັນ.

## ພື້ນທີ່ແນະນໍາປູກ

ເຂດພາກເໜືອ ແລະ ພາກໃຕ້ເຊັ່ນ: ແຂວງຫຼວງພະບາງ, ແຂວງໄຊຍະບູລີ, ແຂວງອຸດົມໄຊ, ແຂວງຫຼວງນໍ້າທາ, ແຂວງບໍ່ແກ້ວ, ແຂວງຊຽງຂວາງ, ແຂວງຫົວພັນ ແລະ ແຂວງອັດຕະປື.

## ຂໍ້ຄວນລະວັງ

- ບໍ່ທົນທານພະຍາດຈຸດສີນໍ້າຕານ (Brown spot)
- ລໍາຕົ້ນນ້ອຍ, ລົ້ມຖ້າປູກໃນພື້ນທີ່ອຸດົມສົມບູນ.

**ຂໍ້ມູນເພີ່ມເຕີມ**

**ໂດຍ:**

**ທ ຄໍາດອກ ຊົງຢີຕັ້ງຊື່ທໍ່**

ສູນຄົ້ນຄ້ວາກະສິກໍາ ແລະ ປ່າໄມ້ພາກເໜືອ

ແຂວງຫຼວງພະບາງ

ຕູ້ ປ. ນ: 467

ໂທ: (856-71) 212099

ແຟກ: (856-71) 212467

email: NAFReC@nafri.org.la

**ກະຊວງກະສິກໍາ ແລະ ປ່າໄມ້**

**ສະຖາບັນຄົ້ນຄວ້າກະສິກໍາ ແລະ ປ່າໄມ້ແຫ່ງຊາດ**

**ສູນຄົ້ນຄ້ວາກະສິກໍາແລະ ປ່າໄມ້ພາກເໜືອ**

# ເຂົ້າ ລາບູນ



ທັນວາ, 2009

## ປະຫວັດຄວາມເປັນມາ

ເຂົ້າລາບູນ (LG-12803) ແມ່ນແນວພັນເຂົ້າບົກພື້ນເມືອງລາວໃນທ້ອງຖິ່ນ ເມືອງ ທ່າປາງທອງ, ແຂວງ ສະຫວັນນະເຂດ. ໃນປີ 1995 ຫາ 2000 ໂຄງການອະນຸຮັກເຊື້ອພັນເຂົ້າ (Lao-IRRI Biodiversity project) ໄດ້ເກັບໂຮມແນວພັນເຂົ້າໃນທົ່ວປະເທດໄດ້ 13.191 ຕົວຢ່າງ, ໃນນັ້ນມີແນວພັນເຂົ້າບົກ 7.300 ຕົວຢ່າງ ໄດ້ນຳມາເກັບມ້ຽນ ແລະ ຮັກສາໄວ້ໃນທະນາຄານເຊື້ອພັນເຂົ້າລາວ.

ປີ 2000 ໄດ້ນຳມາສຶກສາ ແລະ ຄັດເລືອກທີ່ສູນຄົ້ນຄ້ວາກະສິກຳ ແລະ ປ່າໄມ້ພາກເໜືອ. ແລະ ປີ 2003 ໄດ້ນຳໄປທົດລອງ ການຄັດເລືອກແບບມີສ່ວນຮ່ວມຂອງຊາວກະສິກອນໃນ 8 ແຂວງ ພາກເໜືອ, ຜ່ານຈາກການທົດລອງເຫັນວ່າ ສາມາດປັບຕົວໄດ້ດີ ແລະ ເປັນທີ່ຍອມຮັບຂອງຊາວກະສິກອນ.

## ລັກສະນະປະຈຳພັນ

- ເປັນປະເພດເຂົ້າໜຽວມີຄວາມຮູ້ສຶກຕໍ່ຊ່ວງແສງ, ອາຍຸ 120 – 130 ວັນ.
- ຊ່ວງປູກ ທ້າຍເດືອນ ເມສາ (4) - ຕົ້ນເດືອນ ມິຖຸ (6) ຊ່ວງໄລຍະຝົນຕົກ.
- ລຳຕົ້ນສູງປະມານ 100 – 125 ຊັງຕີແມັດ.
- ໃບເປັນສີຂຽວ ຂອບສີມ່ວງ, ແຜ່ນໃບມີຂົນ.
- ເມັດເຂົ້າເປືອກມີຂົນ ເປັນສີເຫຼືອງ.




- ເມັດນ້ອຍ, ຍາວ 10.34 ມິນລີແມັດ, ກ້ວາງ 3.06 ມິນລີແມັດ, ໜາ 1.98 ມິນລີແມັດ.
- ເມັດເຂົ້າກ້ອງ ຍາວ 6 ມິນລີແມັດ, ກ້ວາງ 2.44 ມິນລີແມັດ, ໜາ 1.72 ມິນລີແມັດ.
- ຄຸນນະພາບການກິນດີ, ອ່ອນ, ເມັດເຂົ້າສານສີຂາວ, ປະລິມານອາມີໂລດ (6.4%)
- ນ້ຳໜັກ 1000 ເມັດ 29.2 ກຣາມ.




## ລັກສະນະເດັ່ນ

- ຜົນຜະລິດສູງ, ສາມາດປູກໄດ້ດີໃນດິນຂີ້ລ້າຍ ແລະ ພື້ນທີ່ປູກເຂົ້າຕໍ່ເນື່ອງ 2 - 3 ປີ.
- ສາມາດປູກໄດ້ໃນລະດັບຄວາມສູງຈາກໜ້ານ້ຳ ທະເລ 300 – 1200 ແມັດ.
- ທົນທານຕໍ່ແມງໄຂ່ປາ (Root aphid)

